ວິທີກອກຟອຣ໌ມຄຳຮ້ອງຂໍກິນອາຫານຟຣີ

ກະລຸນາກອກຟອຣ໌ມຄຳຮ້ອງຂໍກິນອາຫານຟຣີ ໂດຍປະຕິບັດຕາມຄຳແນະນຳຂ້າງລຸ່ມນີ້ ແລະເຊັນຊື່ຂອງທ່ານ ແລ້ວສົ່ງຄືນໄປໃຫ້ _____ ຖ້າຕ້ອງການຄວາມຊ່ວຍເຫລືອຂຽນຟອຣ໌ມນີ້ ໃຫ້ໂທໄປຍັງເລກ_____

---

1. **ຂໍ້ມູນກ່ຽວກັບເດັກ: ຂຽນຊື່ລູກຂອງທ່ານເປັນໂຕພິມ**

(ກ) ຖ້າຫາກວ່າທ່ານຍື່ນຄຳຮ້ອງສຳຫລັບອາຫານຢູ່ໂຮງຮຽນ ໃຫ້ບອກຊັ້ນ ແລະຊື່ໂຮງຮຽນຂອງລູກ

(ຂ) ຖ້າຫາກທ່ານຍື່ນຄຳຮ້ອງສຳຫລັບອາຫານທີ່ບໍລິການໃຫ້ເດັກ ໃຫ້ບອກຊື່ສະຖານທີ່ດູແລເດັກ ຫລືຊື່ເຈົ້າຂອງເຮືອນຜູ້ຮັບດູແລເດັກ ຢູ່ກັບບ້ານ ແລະຊື່ຂອງຜູ້ອຸປຖັມ ຖ້າຮູ້ຈັກ.

(ຄ) ຖ້າທ່ານຍື່ນຄຳຮ້ອງສຳຫລັບອາຫານພາຍໃຕ້ໂຄງການບໍລິການອາຫານຍາມຮ້ອນ (SFSP) ກະລຸນາໝາຍກາ ✓ ໃສ່ປ່ອງ[ ] ໃນຟອຣ໌ມນັ້ນ

---

2. **ລູກບຸນທັນ: ໃຫ້ຕອບຄຳຖາມໃນຂໍ້ສອງນີ້ ແລະໃຫ້ເຊັນຊື່ໃນຂໍ້ 5.**

(ກ) ໃຫ້ບອກຈຳນວນເງິນທີ່ລູກບຸນທັນໄດ້ຮັບ ສຳຫລັບໃຊ້ສ່ວນໂຕໃນແຕ່ລະເດືອນ ຖ້າຫາກວ່າເດັກບໍ່ໄດ້ຮັບເງິນສຳຫລັບໃຊ້ສ່ວນໂຕ ໃຫ້ຂຽນ 0 (ສູນ)ໃສ່

(ຂ) ພໍ່ຫລືແມ່ບຸນທັນ ຫລືເຈົ້າໜ້າທີ່ຄົນໃດກໍຕາມທີ່ຕາງໜ້າເດັກ ຈະຕ້ອງເຊັນໃບຄຳຮ້ອງນີ້ໃນຂໍ້ 5. ທ່ານບໍ່ຈຳເປັນຕ້ອງແຈ້ງເລກ ສວັດດີການສັງຄົມ(**Social Security Number**)

(ຄ) ໃຫ້ກອກໃບຄຳຮ້ອງແຕ່ລະໃບ ສຳຫລັບລູກບຸນທັນແຕ່ລະຄົນ

---

3. **ຜົນປະໂຍດອື່ນໆທີ່ທ່ານໄດ້ຮັບ: ໃຫ້ຕອບຄຳຖາມລົງໃນຂໍ້ນີ້ແລ້ວເຊັນຊື່ທ່ານລົງໃນຂໍ້ 5.**

(ກ) ຖ້າຫາກທ່ານຍື່ນຄຳຮ້ອງສຳຫລັບອາຫານຢູ່ໂຮງຮຽນ ໃຫ້ແຈ້ງໝາຍເລກການຊ່ວຍເຫລືອດ້ານຟູດສແຕມ, **FDPIR** ຫລື **TANF** ທີ່ທ່ານໄດ້ຮັບສຳຫລັບລູກຂອງທ່ານ.

(ຂ) ຖ້າຫາກທ່ານເປັນຜູ້ຮັບດູແລເດັກຢູ່ບ້ານທີ່ຮ້ອງຂໍເອົາຜົນປະໂຍດຕາມອັດຕາຂອງຂັ້ນນຶ່ງ(**Tier I**) ໃຫ້ແຈ້ງໝາຍເລກການຊ່ວຍເຫລືອສຳຫລັບຟູດສແຕມ **FDPIR** ຫລື **TANF** ທີ່ທ່ານໄດ້ຮັບໃນປັດຈຸບັນສຳຫລັບໂຕທ່ານເອງແລະລູກ.

(ຄ) ຖ້າຫາກລູກຂອງທ່ານໄດ້ຮັບການດູແລຢູ່ເຮືອນດູແລເດັກຂັ້ນສອງ (**Tier II**) ໃຫ້ແຈ້ງໂຄງການຊ່ວຍເຫລືອອື່ນໆທີ່ທ່ານໄດ້ຮັບ ແລະໝາຍເລກການຊ່ວຍເຫລືອ ຖ້າມີ (ໃຫ້ເບິ່ງລາຍຊື່ໂຄງການຊ່ວຍເຫລືອອື່ນໆທີ່ທ່ານອາດມີສິດໄດ້ຮັບ ທີ່ເຮົາໄດ້ສອດມາພ້ອມນີ້)

(ງ) ໃຫ້ເຊັນໃບຄຳຮ້ອງນີ້ໃນຂໍ້ 5. ຜູ້ທີ່ເຊັນຕ້ອງເປັນສະມາຊິກຜູ້ໃຫຍ່ໃນຄອບຄົວ ແລະທ່ານບໍ່ຈຳເປັນຕ້ອງແຈ້ງ **Social Security Number**

---

4. **ສຳຫລັບຄອບຄົວອື່ນໆ: ຕອບຄຳຖາມໃນຂໍ້ນີ້ແລ້ວໃຫ້ເຊັນຊື່ໃນຂໍ້ 5.**

(ກ) ໃຫ້ຂຽນຊື່ສະມາຊິກທຸກໆຄົນໃນຄອບຄົວ ເຖິງແມ່ນຜູ້ກ່ຽວບໍ່ມີລາຍໄດ້ກໍຕາມ ໂຮມທັງຊື່ທ່ານເອງ ຊື່ສາມີ ຊື່ລູກທີ່ທ່ານ ຍື່ນຄຳຮ້ອງຂໍຮັບຜົນປະໂຍດ ແລະສະມາຊິກຄົນອື່ນທັງໝົດໃນຄອບຄົວ.

(ຂ) ໃຫ້ຂຽນຈຳນວນເງິນລາຍໄດ້ກ່ອນຫັກຄ່າພາສີ ຫລືຄ່າອື່ນໆທີ່ສະມາຊິກຄອບຄົວແຕ່ລະຄົນໄດ້ຮັບໃນເດືອນແລ້ວນີ້ <u>ແລະ</u> ແຫລ່ງທີ່ມາ ຂອງລາຍໄດ້ ເປັນຕົ້ນວ່າເງິນເດືອນ ຄ່າແຮງງານ ເງິນປະຊາສົງເຄາະ ເງິນເບັ້ຍລ້ຽງແລະລາຍໄດ້ອື່ນໆ (ໃຫ້ເບິ່ງລາຍຊື່ໂຕຢ່າງລາຍໄດ້ທີ່ຕ້ອງ ລາຍງານຢູ່ຂ້າງລຸ່ມນີ້) ລາຍໄດ້ແຕ່ລະຢ່າງຕ້ອງຂຽນ ລົງໃຫ້ຖືກກັບຄໍລັມ ຂອງລາຍໄດ້ປະເພດນັ້ນ ຢູ່ໃນໃບຄຳຮ້ອງ. ຖ້າຫາກວ່າລາຍໄດ້ໃດ ກໍຕາມສຳຫລັບ <u>ເດືອນແລ້ວນີ້</u>ມີຫລາຍ ຫລື ມີໜ້ອຍກວ່າປົກຕິ ໃຫ້ແຈ້ງລາຍໄດ້ທີ່ຜູ້ກ່ຽວໄດ້ຮັບເປັນປົກຕິໃນແຕ່ລະເດືອນ.

(ຄ) ຖ້າຫາກຜູ້ໃດຜູ້ນຶ່ງດຳເນີນທຸລະກິດສ່ວນໂຕ ໃຫ້ແຈ້ງລາຍໄດ້ທີ່ຜູ້ກ່ຽວໄດ້ຮັບຈາກທຸລະກິດສ່ວນໂຕນັ້ນ. ໂຕຢ່າງລາຍໄດ້ຈາກການ ຮັບດູແລ ເດັກຢູ່ກັບບ້ານ ຫລືລາຍໄດ້ຈາກການເຮັດຟາຣ໌ມ. ກະລຸນາໂທລະສັບໄປຍັງເລກທີ່ຂ້າງເທິງ ຖ້າຫາກທ່ານຕ້ອງການ ຄວາມຊ່ວຍເຫລືອ.

(ງ) ຖ້າຫາກທ່ານເປັນຜູ້ບໍລິການສຖານທີ່ດູແລເດັກທີ່ຍື່ນຄຳຮ້ອງຂໍຮັບຜົນປະໂຍດຕາມອັດຕາຂອງຂັ້ນນຶ່ງ(**Tier I**) ກະລຸນາຄັດ ເອກສານຢັ້ງຍືນລາຍໄດ້ຂອງທ່ານມາພ້ອມ ເພື່ອຢັ້ງຍືນຖານະຂອງທ່ານ.

(ຈ) ເຊັນຟອຣ່ມແລະແຈ້ງເລກສວັດດີການສັງຄົມຂອງທ່ານລົງໃນຂໍ້ 5. *ຖ້າຫາກວ່າທ່ານບໍ່ມີເລກສວັດດີການສັງຄົມໃຫ້ຂຽນວ່າ* None

---

5 **ລາຍເຊັນແລະເລກສວັດດີການສັງຄົມ:**

(ກ) ຟອຣ່ມນີ້ ຕ້ອງມີລາຍເຊັນຂອງສມາຊິກຄອບຄົວຜູ້ໃຫຍ່.

(ຂ) ສມາຊິກຄອບຄົວຜູ້ໃຫຍ່ທີ່ເຊັນຟອຣ່ມນີ້ ຕ້ອງແຈ້ງ **Social Security Number** ຂອງຕົນ.*ຖ້າຜູ້ກ່ຽວບໍ່ມີເລກສວັດດີການສັງຄົມໃຫ້ ຂຽນວ່າ* None ທ່ານບໍ່ຕ້ອງແຈ້ງເລກສວັດດີການສັງຄົມ ຖ້າຫາກວ່າທ່ານແຈ້ງໝາຍເລກການຊ່ວຍເຫລືອດ້ານຟູດສແຕມ, **FDPIR** ຫລື **TANF** ທີ່ທ່ານໄດ້ຮັບ ຫລືວ່າຖ້າທ່ານຍື່ນຄຳຮ້ອງຂໍໃຫ້ລູກບຸນທັມ.

(ຄ) ຖ້າຫາກວ່າທ່ານຍື່ນຄຳຮ້ອງຂໍຮັບຜົນປະໂຍດຕາມອັດຕາຂອງຂັ້ນນຶ່ງ **(Tier I)** ໃນຖານະທີ່ທ່ານເປັນຜູ້ບໍລິການສຖານທີ່ດູແລ ເດັກຢູ່ກັບບ້ານ ກໍຈົ່ງແຈ້ງ ລົງໃນຂໍ້ 5 ນີ້

---

6. ເຊື້ອຊາດ / ເຜົ່າພັນ: ທ່ານ ບໍ່ຈຳເປັນ ຕ້ອງຕອບຄຳຖາມຂໍ້ນີ້ກໍໄດ້ ແຕ່ຖ້າທ່ານຕອບໄປ ກໍຈະເປັນການຊ່ວຍຮັປກັນວ່າທຸກງຄົນ ໄດ້ຮັບການປະຕິບັດຕໍ່ຢ່າງຍຸຕິທັມແລະເທົ່າທຽມກັນ.

ລາຍໄດ້ທີ່ຕ້ອງລາຍງານ

<u>ລາຍໄດ້ຈາກວຽກງານ</u>

ຄ່າແຮງງານ/ ເງີນເດືອນ/ ຄ່າທີບ
ເງີນທີ່ໄດ້ຈາກການຢຸດງານປະທ້ວງ
ເງີນຊົດເຊີຍການວ່າງງານ
ເງີນຊົດເຊີຍຄວາມເສັຍຫາຍທີ່ໄດ້ຮັບໃນຂນະທຳງານ
ລາຍໄດ້ສຸດທິຈາກທຸລະກິດສ່ວນໂຕ,
ທຸລະກິດດູແລເດັກ ຫລືເຮັດຟາຣ່ມ

<u>ເງີນເບັ້ຍລ້ຽງ/ເງີນເບັ້ຍບຳນານ/ເງີນສວັດດີການສັງຄົມ</u>

ເງີນເບັ້ຍລ້ຽງ
ເງີນສວັດດີການສັງຄົມສຳຫລັບຜູ້ເຖົ້າ
ເງີນເບັ້ຍບຳນານ
ເງີນສົງເຄາະນັກລົບເກົ່າ
ເງີນສວັດດີການສັງຄົມ

<u>ລາຍໄດ້ປຈຳເດືອນອື່ນງ/ລາຍໄດ້ຈາກທຸລະກິດສ່ວນໂຕ</u>

ເງີນຊ່ວຍເຫລືອຄົນພິການ
ເງີນສົດຖອນອອກຈາກບັນຊີອອມສິນຫລືຝາກປະຍັດ
ດອກເບັ້ຍ ເງີນປັນຜົນກຳໄລ
ລາຍໄດ້ຈາກກອງມໍລະດົກ/ ຈາກຊັບສິນທີ່ຝາກໄວ້ໃນຄວາມ
ດູແລຂອງຄົນອື່ນ/ຈາກການລົງທຶນ
ເງີນຊ່ວຍເຫລືອປະຈຳທີ່ໄດ້ຮັບຈາກຄົນອື່ນ ທີ່ບໍ່ຢູ່ໃນຄອບຄົວ
ເງີນລາຍໄດ້ຈາກການຂຽນພິມໜັງສື /ຄ່າປະກັນໄພ
ຄ່າເຊົ່າເຮືອນຫລືທີ່ດິນ
ຄ່າຊ່ວຍເຫລືອສຳຫລັບຄອບຄົວທຫານທີ່ບໍ່ຢູ່ໃນຄ້າຍ
ລາຍໄດ້ອື່ນງອີກ

<u>ເງີນປະຊາສົງເຄາະ/ເງີນຄ່າຢ່າຮ້າງ/ຄ່າລ້ຽງລູກ</u>

ເງີນຊ່ວຍເຫລືອຂອງຫລວງ
ເງີນປະຊາສົງເຄາະ
ເງີນລ້ຽງດູຈາກການຢ່າຮ້າງ/ເງີນຄ່າລ້ຽງລູກ